# ບົດທີ 14

## ນັກວິທະຍາສາດຕໍ່ຕ້ານການອັດສະຈັນຂອງພະເຢຊູ









ຄົນທຳອິດທີ່ຕັ້ງກົດເກນຂອງຄວາມດຶງດູດນັ້ນ ໃນ ຄ.ສ. 1665 ນັກວິທະຍາສາດໃນປະເທດ ອັງກິດ ຊື່ວ່າ ນິວເຕິນ ມີມື້ໜຶ່ງເພິ່ນນັ່ງໃນສວນແລ້ວ ເຫັນໝາກໂປມ (ແອັບເປິ້ນ) ຕົກລົງໃສ່ດິນ...

1 ເຫັນໝາກໂປມຕົກແລ້ວນິວເຕິນຄິດເລື່ອງໝາກໂປມຫຼາຍວ່າເປັນຫຍັງ ມັນຕົກລົງແລ້ວບໍ່ຂຶ້ນໄປຈັກເທື່ອ.ໝາກ ໂປມນັ້ນຕົກໄປທາງໃດ? ________________________________

2 ເຫັນອີກໜ່ວຍໜຶ່ງຕົກແລ້ວເຫັນໜ່ວຍໜຶ່ງອີກແລະເຫັນອີກທຸກໜ່ວຍຕົກລົງຢ່າງໃດ? _____

3 ຖ້າວ່າເປັນດັ່ງນັ້ນ ຄັນເບິ່ງເຖິງຮ້ອຍໜ່ວຍມັນກໍ່ຈະຕົກໄປທາງໃດໝົດ? _____________

4 ທ່ານນິວເຕິນເບິ່ງໝາກໂປມນັ້ນຕົກຈົນຄຶດປະຫຼາດໃຈ ເອ໋! ແມ່ນເພາະເຫດໃດມັນຕົກຈາກເທິງລົງລຸ່ມທຸກເທື່ອບໍ່ ເຫັນຈັກໜ່ວຍທີ່ຕົກໄປທາງອື່ນບໍ່ລົງດິນ. ດັ່ງນັ້ນ ນິວເຕິນ ໄດ້ຄົ້ນພົບກົດເກນຄວາມດຶງດູດທີ່ອະທິບາຍເຫດທີ່ໝາກໂປມ ຫຼື ສິ່ງໃດໜຶ່ງຈະຕົກນອກໄປຈາກການລົງສູ່ໜ້າດິນຈັກເທື່ອ. ນ້ຳໜັກຂອງໂລກເປັນແຮງດຶງດູດນ້ຳໜັກຂອງໝາກໂປມເກີດເປັນແຮງໂນ້ມຖ່ວງເຊິ່ງກັນແລະກັນເພາະເຫດນັ້ນ ນິວເຕິນໄດ້ເຂົ້າໃຈເລື່ອງການເຄື່ອນໄຫວຂອງດວງຕາເວັນ ດວງຈັນ ແລະ ດວງດາວພະເຄາະ ຕ່າງ ໆ. ທ່ານນິວເຕິນຄົ້ນພົບກົດເກນແຮງດຶງດູດ

ໃນປີໃດ? (ເບິ່ງໜ້າປົກບົດນີ້ກໍ່ໄດ້) ________________________________

5 ກ່ອນປີ 1665 ນັ້ນໝາກໂປມເຄີຍຕົກມາທາງໃດ? ______________________

6 ດັ່ງນັ້ນໝາກໂປມເຄີຍຕົກລົງດິນໃນສະໄໝໃດ? (ໃຫ້ເລືອກໝາຍເອົາຂໍ້ທີ່ເຫັນວ່າຖືກ)

ກ. ຕົກໄປທາງນັ້ນຕະຫຼອດເວລາ.

ຂ. ຕົກໄປທາງນັ້ນແຕ່ສະເພາະຫຼັງຈາກທ່ານນິວເຕີນຄົ້ນພົບ.

ຄ. ຕົກໄປທາງນັ້ນແຕ່ສະເພາະເມື່ອມີຄົນເບິ່ງເຫັນ.

7 ໝາກໂປມເຄີຍຕົກລົງສູ່ດິນກ່ອນທີ່ນິວເຕີນຄົ້ນພົບກົດເກນແຮງດຶງດູດ.ໝາຍຄວາມວ່າຢ່າງໃດ? (ເລືອກ)

ກ. ກົດເກນນັ້ນເປັນສິ່ງທີ່ເຮັດໃຫ້ມັນຕົກ.

ຂ. ກົດເກນນັ້ນເປັນສິ່ງທີ່ອະທິບາຍເຫດທີ່ມັນຕົກ.

ຄ. ກົດເກນນັ້ນເປັນແຕ່ສະເພາະເລື່ອງໝາກໂປມໝາກມ່ວງບໍ່ກ່ຽວ.

8 (ຈົ່ງຕື່ມຄວາມທີ່ຂາດຕໍ່ໄປນີ້) ກົດເກນບໍ່ແມ່ນອັນທີ່ເຮັດໃຫ້ສິ່ງຂອງນັ້ນຕົກເປັນພຽງແຕ່ຄວາມ__________ ເລື່ອງເຫດການນັ້ນ. ກົດເກນດ້ານວິທະຍາສາດທຸກຢ່າງກໍ່ເຊັ່ນດຽວກັນເຫດຜົນບໍ່ໄດ້ມາທາງກົດເກນເພາະກົດເກນພຽງແຕ່ __________ ເລື່ອງຈິງທີ່ມີຢູ່ແລ້ວ.

9 ຄຳວ່າ "ກົດໝາຍ" ແລະ "ກົດເກນ" ແຕກຕ່າງກັນ. ລັດຖະບານເປັນຜູ້ແຕ່ງກົດໝາຍໄວ້ແລະກົດໝາຍ ນັ້ນປ່ຽນໄດ້ຖ້າວ່າລັດຖະບານສັ່ງໃຫ້ປ່ຽນ.

ກ. ແມ່ນກົດໃດທີ່ສັ່ງວ່າປະຊາຊົນຕ້ອງເສຍພາສີ? ______________________

ຂ. ແມ່ນກົດໃດທີ່ອະທິບາຍວ່າວັດຖຸທຸກສິ່ງຕ້ອງຕົກລົງສູ່ໜ້າດິນ? ______________

10 ກ. ແມ່ນກົດໃດທີ່ສັ່ງວ່າປະຊາຊົນຕ້ອງເຮັດຕາມກົດທີ່ວາງໄວ້? ______________

ຂ. ແມ່ນກົດໃດອະທິບາຍວ່າສິ່ງທີ່ເປັນຈິງຢ່າງໃດ ກໍ່ເປັນຢູ່ຢ່າງນັ້ນ? ___________

11 ກົດໝາຍເຮັດໃຫ້ເກີດມີຜົນໄດ້ຮັບ ແຕ່ກົດເກນອະທິບາຍເລື່ອງເຫດການແລະຜົນຂອງມັນສຳລັບມັນເອງບໍ່ມີຜົນ ໄດ້ຮັບ.

ກ. ແມ່ນກົດໃດທີ່ມະນຸດປ່ຽນໄດ້? ________________________________

ຂ. ແມ່ນກົດໃດທີ່ມະນຸດປ່ຽນແປງບໍ່ໄດ້? ____________________________

12 ຖ້າຢ່າງນັ້ນກົດເກນຕ້ອງເກີດມານອກເໜືອຈາກຄຳສັ່ງຂອງມະນຸດ.

ໃຫ້ທ່ານອ່ານ ມັດທາຍ 5:45

ກ. ແມ່ນໃຜເຮັດໃຫ້ຕາເວັນຂຶ້ນ? ________________________________

ຂ. ແມ່ນໃຜເຮັດໃຫ້ຝົນຕົກ? __________________________________

**13** ພະຄຳພີຍົກຕົວຢ່າງຫຼາຍປະການທີ່ ພະເຈົ້າ ເປັນຜູ້ປົກຄອງດິນຟ້າອາກາດ. ໃຫ້ທ່ານອ່ານພະຄຳພີດັ່ງຕໍ່ໄປນີ້ ແລ້ວຕື່ມຄວາມທີ່ຂາດ.

ກ. ເພງສັນລະເສີນ 104:13 ພະອົງຊົງໃຫ້ _______ ຈາກສະຫວັນຊັ້ນຟ້າຕົກລົງໃສ່ _______ ທັງຫຼາຍ ຜົນການກະທຳຂອງພະອົງເຕັມທົ່ວ _______ ນີ້.

ຂ. ພສສ 148:8 ຟ້າແມບ ________, ________ ແລະ ________ ພ້ອມທັງ ________ ແຮງ ກ້າທີ່ເຊື່ອຟັງຄຳສັ່ງຂອງພະອົງ.

ຄ. ອຊຢ 40:26 ຜູ້ໃດສ້າງດາວທັງຫຼາຍທີ່ທ່ານເຫັນນີ້? _______ ຜູ້ຊົງນຳມັນອອກມາ... ຈົນບໍ່ມີຈັກດວງສູນ_______ໄປ.

**14** ໃຫ້ອ່ານ ເຮັບເລີ 1:3 ພະອົງຊົງຄ້ຳຊູພິພົບຫຍັງໄວ້ດ້ວຍພະວະຈະນະອັນຊົງລິດຂອງ ພະອົງ?

_______________________________________________________________

**15** ປາກົດວ່າ ດວງຕາເວັນ ດວງດາວ ລົມໝາກໂປມ ແລະ ທຸກສິ່ງໃນໂລກ ໃນຈັກກະວານເຄື່ອນໄຫວຕາມລະ ບຽບເພາະເຫດໃດ? (ເລືອກ)

ກ. ມັນເກີດມາດ້ວຍຕົນເອງ.

ຂ. ກົດເກນລົງຄຳສັ່ງໃຫ້ເປັນເຊັ່ນນັ້ນ.

ຄ. ພະເຈົ້າ ສັ່ງໃຫ້ເປັນຢ່າງນັ້ນ.

**16** ດັ່ງນັ້ນແມ່ນໃຜແຕ່ງກົດທຳມະຊາດປົກຄອງດິນຟ້າອາກາດໄວ້? ___________________

**17** ກົດເກນນັ້ນບໍ່ມີຜົນຮັບ ແຕ່ກົດເກນນັ້ນເປັນຜົນລັບຂອງຄຳສັ່ງໃຜ? ________________

**18** ເນື່ອງຈາກວ່າ ພະເຈົ້າ ເປັນອົງສັດຊື່ທີ່ບໍ່ປ່ຽນແປງຈັກກະວານທີ່ພະອົງສ້າງໄວ້ແລະກົດເກນໃນຈັກກະວານນັ້ນຄົງ ທີ່ແລະບໍ່ປ່ຽນແປງ. ໃນສາມຂໍ້ພະຄຳພີຕໍ່ໄປນີ້ເວົ້າເຖິງພະເຈົ້າຄຸ້ມຄອງຈັກກະວານຕາມລະບຽບ. ໃຫ້ທ່ານອ່ານແລ້ວເລືອກເບິ່ງວ່າຖືກກັບປະໂຫຍກໃດທີ່ຢູ່ຂ້າງຂວາແລະເອົາຫົວຂໍ້ມາຈັບຄູ່ໃຫ້ຖືກ.

| | |
|---|---|
| ______1. ສຸພາສິດ 8:29 | ກ. ພະເຈົ້າຄຸ້ມຄອງທັງດວງອາທິດ ເດືອນ ແລະ ດາວ ໃຫ້ສ່ອງແສງຕາມຍາມ. |
| ______2. ປຖກ 8:22 | ຂ. ພະເຈົ້າ ຈຳກັດບ່ອນໄວ້ສຳລັບນ້ຳທະເລ. |
| ______3. ເຢເລມີຢາ 31:35 | ຄ. ພະເຈົ້າ ຮັກສາໃຫ້ມີເວລາປູກ ເວລາເກັບກ່ຽວໄວ້. |

**19** ເປັນຫຍັງທຳມະຊາດເກີດຂຶ້ນມາຢ່າງຄົງທີ່ຕາມລະບຽບ? (ເລືອກ)

ກ. ເພາະກົດເກນຄຸ້ມຄອງໄວ້.

ຂ. ເພາະ ພະເຈົ້າເຮັດເປັນການອັດສະຈັນ.

ຄ. ເພາະ ພະເຈົ້າຈັດຈັກກະວານໄວ້ໃຫ້ເປັນລະບຽບ.

*ຖ້າວ່າ ພະເຈົ້າ ບໍ່ໄດ້ແຕ່ງຈັກກະວານໄວ້ຕາມລະບຽບໝາກໂປມທີ່ທ່ານ ນິວເຕີນເຫັນແລ້ວນັ້ນຈະຕົກໄປຫຼາຍທິດຫຼາຍທາງ ດັ່ງນັ້ນນັກວິທະຍາສາດຈະຄົ້ນພົບກົດເກນຕ່າງໆບໍ່ໄດ້ ຖ້າບໍ່ມີກົດ*

*ທຳມະຊາດທີ່ມີຢູ່. ທີ່ຈິງວິທະຍາສາດສະໄໝນີ້ພຽງແຕ່ຄົ້ນພົບແລະອະທິບາຍແລ້ວຕັ້ງກົດເກນໄວ້ໄດ້. ເພາະພະເຈົ້າສ້າງໂລກ ແລະ ຈັກກະວານໃຫ້ດຳເນີນຢູ່ຢ່າງຄົງທີ່ບໍ່ປ່ຽນແປງຕັ້ງແຕ່ອາດີດເຖິງປະຈຸບັນແລະອານາຄົດ. ພະອົງສ້າງທຸກສິ່ງໄວ້ບໍ່ປ່ຽນແປງສະນັ້ນພະເຈົ້າເອງບໍ່ປ່ຽນແປງ ໃຫ້ເຮົາຂອບໃຈນຳພະອົງທີ່ເປັນຢ່າງນັ້ນ.*

**20** ກ. ແມ່ນໃຜແຕ່ງກົດທຳມະຊາດໄວ້? ________________________________

ຂ. ໃຫ້ທ່ານອະທິບາຍວ່າແມ່ນດ້ວຍເຫດໃດທີ່ໂລກຈັກກະວານຢູ່ຢ່າງເປັນລະບຽບບໍ່ປ່ຽນແປງ?

________________________________________________

ຄ. ກົດເກນນັ້ນບໍ່ໄດ້ແຕ່ງຫຍັງຂຶ້ນມາເພາະພຽງແຕ່ເປັນການອະທິບາຍ. ແມ່ນໃຜເປັນຜູ້ແຕ່ງຂຶ້ນ? ________________________________________

**21** ໃຫ້ອ່ານ ດານີເອນ 4:35 ມີໃຜຈະຂັດຂວາງນ້ຳພະໄທຂອງ ພະເຈົ້າ ໄດ້? ____________

**22** ທຳມະດາພະເຈົ້າຈັດໃຫ້ຈັກກະວານດຳເນີນໄປຕາມລະບຽບທີ່ພະອົງຈັດໄວ້ໃຫ້ ແຕ່ ພະເຈົ້າຈຳເປັນຕ້ອງເຮັດ ຕາມແບບນັ້ນຢູ່ສະເໝີບໍ? ______________________________

**23** ແນ່ນອນວ່າຄັນພະເຈົ້າເປັນຜູ້ຈັດຈັກກະວານໄວ້ບໍ່ແມ່ນ ພະເຈົ້າຢູ່ໃຕ້ການປົກຄອງຂອງຈັກກະວານ ແຕ່ຈັກກະ ວານຢູ່ໃຕ້ການປົກຄອງຂອງພະເຈົ້າອຳນາດສູງສຸດຢູ່ກັບໃຜ? _________




**24** ດັ່ງນັ້ນກົດເກນນັ້ນ ບັງຄັບໃຫ້ສິ່ງໜຶ່ງ ສິ່ງໃດເກີດຂຶ້ນບໍ່ໄດ້ແລະຫ້າມສິ່ງໃດກໍ່ບໍ່ໄດ້ດ້ວຍ. ຖ້າຫາກວ່າ ພະເຈົ້າຢາກ ເລືອກໃຫ້ໄປຕາມກົດ ອື່ນ ໆ ຈະໄດ້ບໍ່? __________________

**25** ກົດໝາຍ ຫຼື ກົດເກນຕ່າງ ໆມີຜົນປະໂຫຍດຫຼາຍໃນການປົກຄອງແລະອະທິບາຍລະບຽບເຫດການຕ່າງໆແຕ່ ກົດເຫຼົ່ານັ້ນ...

ກ. ບັງຄັບເຮັດໃຫ້ສິ່ງໜຶ່ງສິ່ງໃດເກີດມີຂຶ້ນໄດ້ບໍ່? ________________________

ຂ. ຈຳກັດພະເຈົ້າໄວ້ໄດ້ບໍ່? ________________________________

ຄ. ອະທິບາຍເຫດການໃນທຳມະຊາດໃນຈັກກະວານໄດ້ບໍ່? __________________

**26** ດັ່ງນັ້ນຖ້າຄົນທີ່ບໍ່ເຊື່ອວ່າ "ວິທະຍາສາດພິສູດວ່າ ການອັດສະຈັນຂອງ ພະເຢຊູ ທີ່ຈົດບັນທຶກໄວ້ໃນພະຄຳພີເປັນ ໄປບໍ່ໄດ້" ທ່ານອາດຈະຕອບດັ່ງຕໍ່ໄປນີ້ໄດ້: "ກົດເກນທາງວິທະຍາສາດພຽງແຕ່ຄົ້ນພົບແລ້ວອະທິບາຍເຫດການຕາມລະບຽບຂອງກົດທຳມະຊາດທີ່ ພະເຈົ້າແຕ່ງໄວ້ແລ້ວນັ້ນເພາະກົດທີ່ມະນຸດສ້າງນັ້ນ ບໍ່ສາມາດຈຳກັດຜູ້ແຕ່ງໄວ້ໄດ້ດອກ! ການອັດສະຈັນຕ້ອງເປັນໄປໄດ້." ພະເຈົ້າຖືກຜູກມັດໄວ້ດ້ວຍກົດເກນທາງວິທະຍາສາດບໍ່? ______________

**27** ແຕ່ຈົ່ງລະວັງເນີ! ມີບາງຢ່າງທີ່ ພະເຈົ້າຈະບໍ່ເຮັດຈັກເທື່ອ

ກ. ໃນ 2 ຕີໂມທຽວ 2:13 ພະເຈົ້າ ບໍ່ສາມາດເຮັດຫຍັງ? ________________________

ຂ. ໃນ ຕີໂຕ 1:2 ພະເຈົ້າ ກ່າວຄຳໃດບໍ່ໄດ້? ________________________________

**28** ດັ່ງນັ້ນ ພະເຈົ້າຈະເຮັດໃຫ້ 2 + 2 = 5 ບໍ່ໄດ້ ເພາະເປັນຄຳຜິດ. ພະເຈົ້າຜິດຄຳສັນຍາບໍ່ໄດ້ເພາະເປັນຄຳຕົວະ ພະເຈົ້າເຮັດການບໍ່ຊອບທຳບໍ່ໄດ້ ເພາະເປັນການປະຕິເສດພະອົງເອງ. ແຕ່ສິ່ງໃດທີ່ບໍ່ແມ່ນຄຳຕົວະຫຼື ບໍ່ປະຕິເສດລັກສະນະຂອງພະອົງເອງພະອົງເຮັດໄດ້! ດັ່ງນັ້ນຖ້າຜູ້ໃດວ່າ "ວິທະຍາ ສາດພິສູດວ່າ ບໍ່ມີການອັດສະຈັນ" ເຮົາຕອບໄດ້ວ່າກົດເກນວິທະຍາສາດນັ້ນ ______________ ພະເຈົ້າ ຜູ້ແຕ່ງບໍ່ໄດ້. (ຕື່ມຄວາມທີ່ຂາດ)

**29** ກົດເກນວິທະຍາສາດນັ້ນມາຈາກໃສ? (ເລືອກ)

ກ. ໃນພະຄຳພີ.

ຂ. ມະນຸດຄົ້ນພົບເມື່ອສັງເກດຈາກທຳມະຊາດແລ້ວຕັ້ງໄວ້.

ຄ. ຄົນບໍ່ເຊື່ອກ່າວໄວ້ເພື່ອຫາເລື່ອງໃສ່ຮ້າຍສະຕຽນ.

**30** ກົດເກນເຫຼົ່ານັ້ນແມ່ນຜູ້ໃດກ່າວໄວ້? (ເລືອກ)

ກ. ມະນຸດ ຂ. ພະເຈົ້າ ຄ. ພະຍາມານ.

**31** ມີສິ່ງໃດທີ່ ພະເຈົ້າ ເຮັດບໍ່ໄດ້? ________________________________________

______________________________________________________________

**32** ເພື່ອນໃນຮູບນັ້ນຄິດຜິດໄປຢ່າງໜຶ່ງວ່າເພິ່ນຖືວ່າກົດເກນມະນຸດນັ້ນມີອຳນາດທີ່ຈະຈຳກັດເຫດການຕ່າງໆ ເພິ່ນ ຄິດວ່າ ກົດເກນເຫຼົ່ານັ້ນຈະຫ້າມບໍ່ໃຫ້ມີສິ່ງໃດສິ່ງໜຶ່ງເກີດຂຶ້ນ ນອກເໜືອຈາກທຳມະຊາດ.

ກ. ທີ່ຈິງກົດເກນທີ່ມະນຸດຕັ້ງໄວ້ນັ້ນບໍ່ສາມາດຫ້າມສິ່ງໜຶ່ງ ສິ່ງໃດແລະບໍ່ສາມາດເຮັດໃຫ້ສິ່ງໜຶ່ງສິ່ງໃດເກີດຂຶ້ນໄດ້ ມີແຕ່ ____________________ ໄດ້ເທົ່ານັ້ນ. (ຕື່ມຄວາມທີ່ຂາດ)

ຂ. ມີບາງຄົນທີ່ຢາກແຕ່ງວິທະຍາສາດໄວ້ໃຫ້ເປັນແທນພະເຈົ້າແຕ່ກົດເກນວິທະຍາສາດແຕ່ງຕັ້ງໄວ້ດ້ວຍມະນຸດ. ແມ່ນຄົນຊື່ຫຍັງແຕ່ງກົດເກນເລື່ອງແຮງດຶງດູດ? ______________

ຄ. ເພື່ອນທີ່ບໍ່ເຊື່ອນັ້ນຍັງຄິດຜິດໄປອີກປະການໜຶ່ງວ່າເພິ່ນຄິດວ່າກົດເກນເຫຼົ່ານັ້ນໃຫຍ່ກວ່າຜູ້ແຕ່ງຈັກກະວານ. ທີ່ຈິງພະເຈົ້າຄຸ້ມຄອງໂລກ. ກົດເກນນັ້ນ _________ ພະເຈົ້າ ບໍ່ໄດ້. (ຕື່ມຄວາມ)

**33** ກ. ແມ່ນໃຜແຕ່ງທຸກສິ່ງທຸກຢ່າງໄວ້? ________________________________

ຂ. ກົດເກນມະນຸດນັ້ນບໍ່ມີຄວາມສາມາດໃນສອງດ້ານໃດ? (ຕື່ມຄວາມທີ່ຂາດຕໍ່ໄປນີ້) ບໍ່ສາມາດເຮັດໃຫ້ສິ່ງໜຶ່ງສິ່ງໃດ ____________ ມີຂຶ້ນ ແລະຈໍາກັດ ____________ ບໍ່ໄດ້.

ຄ. ກົດເກນມະນຸດນັ້ນສາມາດເຮັດຫຍັງໄດ້? ____________________________

ງ. ຖ້າຜູ້ໃດບອກວ່າການອັດສະຈັນເປັນໄປບໍ່ໄດ້ທ່ານຈະຕອບຢ່າງໃດ? ____________

**34** ພະເຈົ້າເປັນຜູ້ແຕ່ງກົດທໍາມະຊາດໄວ້ ແລະພະເຈົ້າກໍ່ແຕ່ງປາກົດການທີ່ເປັນການອັດສະຈັນໄດ້ດ້ວຍ. ພະເຈົ້າ ເປັນຜູ້ແຕ່ງທັງສອງຢ່າງໄວ້ແລະມີຢູ່ບາງເທື່ອທີ່ເຮົາເຫັນເຫດການອັນໃດອັນໜຶ່ງໃນພະຄໍາພີແລະບໍ່ຮູ້ ແນ່ນອນວ່າເປັນການອັດສະຈັນຫຼືບໍ່!
ໃຫ້ທ່ານອ່ານ ລູກາ 4:28-30 ເຫັນວ່າມີຜູ້ຄົນຄຽດພະອົງຫຼາຍໝາຍວ່າຈະຊຸກພະອົງໃຫ້ຕົກລົງໜ້າຜາເພື່ອຂ້າ. ຂໍ້ 30 ຂຽນພຽງແຕ່ພະອົງຍ່າງຜ່ານຖ້າມກາງເຂົາພົ້ນໄປ. ແຕ່ທີ່ຈິງເຮົາບໍ່ຮູ້ວ່າພະອົງໄດ້ພົ້ນນັ້ນດ້ວຍເປັນການອັດສະຈັນຫຼືບໍ່! ແຕ່ເຮົາຮູ້ວ່າເປັນຢ່າງໃດກໍ່ຕາມພະອົງໄດ້ລອດດ້ວຍອໍານາດໃຜ? ________________________________________

**35** ເຊັ່ນດຽວກັນ ບາງເທື່ອ ພະເຈົ້າ ກໍ່ຈະເຮັດການອັດສະຈັນດ້ວຍທາງໃຊ້ກົດທໍາມະຊາດ. ໃຫ້ທ່ານສັງເກດຕົວຢ່າງ ຕໍ່ ໄປນີ້:

ກ. ໃນພະທໍາ ອົບພະຍົບ 10:12-19 ການທີ່ຈະໃຫ້ຝູງຕັກແຕນມາກໍ່ເປັນການອັດສະຈັນ ໃນຂໍ້ 13 ພະເຈົ້າໃຊ້ ຫຍັງໃຫ້ຕັກແຕນມາ? ______________ ຄື ພະເຈົ້າ ໃຊ້ວິທີຕາມທໍາມະຊາດ. ຕໍ່ໄປໃນຂໍ້ 19 ພະເຈົ້າ ໃຊ້ຫຍັງ ເຮັດໃຫ້ຝູງຕັກແຕນຫາຍໜີໄປອີກ? __________

ຂ. ມີການອັດສະຈັນໃຫຍ່ປະການໜຶ່ງໃນປະຫວັດສາດຂອງຊາດອິສະລາເອນຄື: ເຂົາຂ້າມທະເລໄມ້ອໍ້ດ້ວຍ ຍ່າງຂ້າມໄປເທິງດິນກາງທະເລ. (ອພຍ 14:21-22) ແຕ່ ພະເຈົ້າໃຊ້ເຫດການທໍາມະຊາດຢ່າງໃດຈຶ່ງເຮັດໃຫ້ທະເລກາຍມາເປັນດິນແຫ້ງ? ________________

ຄ. ໃນ ກະສັດທີໜຶ່ງ 17:6 ພະເຈົ້າ ເອົາເຂົ້າຈີ່ແລະຊີ້ນມາລ້ຽງຊີວິດຂອງຜູ້ທໍານວາຍ ເອລີຢາດ້ວຍສິ່ງທໍາມະ ຊາດອີກ. ພະເຈົ້າໃຊ້ຫຍັງເອົາມາ? __________________________

**36** ໃນເຫດການທັງສາມປະການນັ້ນພະເຈົ້າເຮັດການອັດສະຈັນດ້ວຍໃຊ້ວິທີຕາມກົດໃດ? _____

**37** ໃຫ້ທ່ານຍົກຕົວຢ່າງຈາກພະຄໍາພີທີ່ ພະເຈົ້າເຮັດການອັດສະຈັນດ້ວຍໃຊ້ວິທີຕາມກົດທໍາມະຊາດ? ______________________________________________________

**38** ການທີ່ກໍາແພງເມືອງເຢລິໂກເຈື່ອນລົງໃນໂຢຊວຍ ບົດ 6 ກໍ່ເປັນການອັດສະຈັນແທ້ ແຕ່ພະເຈົ້າອາດຈະໃຊ້ ເຫດ ການແຜ່ນດິນໄຫວ (ພະຄໍາພີບໍ່ໄດ້ບອກ) ແຕ່ເຖິງຢ່າງໃດກໍ່ຕາມຍັງເປັນການອັດສະຈັນຢູ່ທີ່ ພະເຈົ້າຈະວາງແຜນການໃຫ້ເກີດມີຂຶ້ນໃຫ້ພໍດີກັບເວລານັ້ນ. ອີກຢ່າງໜຶ່ງຍັງເປັນການອັດສະຈັນທີ່ຍັງເຫຼືອແຕ່ເຮືອນຂອງລາຮາບທີ່ບໍ່ໄດ້ລົ້ມລົງ ປາກົດວ່າ:

ພະເຈົ້າ ເປັນຜູ້ແຕ່ງກົດທໍາມະຊາດໄວ້.
ພະເຈົ້າ ໃຊ້ກົດທໍາມະຊາດເປັນເຫດໃນການອັດສະຈັນກໍ່ໄດ້.

ພະເຈົ້າ ເຮັດການອັດສະຈັນດ້ວຍຫຼີກເວັ້ນກົດທຳມະຊາດໄດ້ດ້ວຍ.

ກ. ແຕ່ເຖິງຢ່າງໃດກໍ່ຕາມຍັງເປັນການຂອງໃຜ? ______________________________

ຂ. ສົມຄວນຈະໃຫ້ກຽດແກ່ໃຜ? ______________________________

**39** ກ. ແມ່ນດ້ວຍເຫດໃດທີ່ສິ່ງທຳມະຊາດເກີດຂຶ້ນມາຕາມລະບົບລະບຽບຄືງທີ່? __________

______________________________

ຂ. ກົດເກນຂອງມະນຸດບໍ່ມີອຳນາດໃນສອງດ້ານໃດ? ______________________________

ແລະ ______________________________

ຄ. ກົດເກນວິທະຍາສາດມີຜົນປະໂຫຍດໃນດ້ານໃດ? ______________________________

ງ. ຖ້າມີຄົນມາວ່າພະເຈົ້າເຮັດການອັດສະຈັນບໍ່ໄດ້ ທ່ານອາດຈະຕອບເພິ່ນວ່າຢ່າງໃດ?

______________________________

ຈ. ໃຫ້ທ່ານຍົກຕົວຢ່າງໃນພະຄຳພີທີ່ ພະເຈົ້າໃຊ້ວິທີການທາງທຳມະຊາດເຂົ້າໃນການເຮັດອັດສະຈັນ. ໃຫ້ຍົກການອັດສະຈັນແລະພ້ອມທັງເຫດການທຳມະຊາດມາ? (ບໍ່ຕ້ອງຍົກບົດແລະຂໍ້) ______________________________

______________________________

**40** ກ. ຖ້າວ່າມີຄົນດີພະຍາດຂຶ້ນມາທາງຄຳອ້ອນວອນດ້ວຍບໍ່ໄດ້ກິນຢາເຮົາຄວນຈະຍົກກຽດໃຫ້ໃຜ? ______________________________

ຂ. ຖ້າວ່າຄົນເຈັບນັ້ນດີຂຶ້ນມາທາງຄຳອ້ອນວອນແລະກິນຢາຈາກແພດໝໍດ້ວຍແມ່ນໃຜເຮັດໃຫ້ດີຂຶ້ນມາ? ______________________________

ຈະຍົກກຽດໃຫ້ໃຜ? ______________________________

**41** ເມື່ອພະເຢຊູເຮັດການອັດສະຈັນອາດຈະມີສັນຍາລັກມາພ້ອມເຊິ່ງສັນຍາລັກນັ້ນບໍ່ມີສ່ວນປະກອບໃນການອັດ ສະ ຈັນແຕ່ເປັນສິ່ງທີ່ ພະເຢຊູຍົກມາສະແດງພ້ອມກັນກັບການອັດສະຈັນຂ້າງຊ້າຍຕໍ່ໄປນີ້ມີຕອນພະຄຳພີ 6 ຕອນ. ໃຫ້ທ່ານເອົາຕອນພະຄຳພີເຫຼົ່ານັ້ນມາຂຽນໃສ່ວ່າງໜ້າປະໂຫຍກສັນຍາລັກຂ້າງຂວາ.

| | | |
|---|---|---|
| ມທ 8:3 | ກ. __________ | ຄຳອ້ອນວອນ. |
| ມທ 8:13 | ຂ. __________ | ພະອົງສັ່ງໃຫ້ຄົນເຈັບເຮັດສິ່ງທີ່ບໍ່ເຄີຍສາມາດເຮັດມາກ່ອນ |
| ມທ 9:6 | ຄ. __________ | ພະອົງຢຽດມືອອກໃຫ້ຄົນເຈັບ. |
| ມທ 9:20 | ງ. __________ | ຄົນເຈັບຢຽດມືມາຖືກພະອົງ. |
| ລູກາ 17:14 | ຈ. __________ | ພະອົງບອກຄວາມໃຫ້ເຂົາ. |
| ຢຮ 11:41-43 | ສ. __________ | ພະອົງກ່າວແກ່ເຂົາຈົ່ງເຮັດສິ່ງໜຶ່ງສິ່ງໃດທີ່ສະແດງວ່າ ເຊື່ອໃນພະອົງ. |

**42** ການອັດສະຈັນທີ່ພະອົງກະທຳນັ້ນມາແຍກເປັນ 4 ຈຳພວກໄດ້ຄື:

1. ການໂຜດຄົນເຈັບ ຫຼື ຄົນຕາຍໃຫ້ດີແລະຄືນ.
2. ການໄລ່ຜີອອກ.
3. ການຫາໃຫ້ສິ່ງຂອງທີ່ຈຳເປັນ.
4. ການປົກຄອງດິນຟ້າອາກາດ.

ໃນລາຍຊື່ຕໍ່ໄປນີ້ ໃຫ້ທ່ານເອົາການອັດສະຈັນແຕ່ລະຈຳພວກທີ່ມີຢູ່ເທິງນັ້ນມາຂຽນໃສ່ບ່ອນວ່າງໜ້າເຫດການຕໍ່ໄປນີ້:

________________ ກ. ການຊົງລ້ຽງຫ້າພັນຄົນ.

________________ ຂ. ຫ້າມລົມແລະທະເລ.

________________ ຄ. ຄົນມີຜີສິງຢູ່ກາດາລາ.

________________ ງ. ແມ່ເມຍເປໂຕ.

________________ ຈ. ພະອົງດຳເນີນເທິງນ້ຳ.

________________ ສ. ເອົານ້ຳປ່ຽນເປັນເຫຼົ້າແວງ.

________________ ຊ. ເລື່ອງລູກສາວເຈົ້ານາຍໃຫ້ຄືນມາຈາກຕາຍ.

________________ ຍ. ໄລ່ຜີອອກຈາກຄົນປາກກືກ.

*ແຕ່ວ່າການອັດສະຈັນຍິ່ງໃຫຍ່ທີ່ສຸດຄື:*

*ພະເຢຊູຮັບຊາດເປັນມະນຸດ.*

*ພະເຢຊູຄືນມາຈາກຕາຍ.*

*ພະເຢຊູສະເດັດຂຶ້ນສູ່ສະຫວັນ.*

**43** ໃຫ້ເຮົາກັບຄືນໄປທວນຄືນເລື່ອງໃນບົດນີ້ໜ້ອຍໜຶ່ງ

ກ. ກົດເກນວິທະຍາສາດເຮັດສອງປະການໃດບໍ່ໄດ້? ________________

________________________________

ຂ. ແຕ່ມີປະໂຫຍດເຮັດສິ່ງໃດໄດ້? ________________

ຄ. ຖ້າມີຄົນມາຕິວ່າພະເຈົ້າເຮັດການອັດສະຈັນບໍ່ໄດ້ ທ່ານຈະຕອບຢ່າງໃດ? __________

________________________________

ງ. ການອັດສະຈັນທີ່ ພະເຢຊູກະທຳໄດ້ແຍກມາເປັນ 4 ຈຳພວກໃດແດ່? __________

________________________________

________________________________

________________________________

________________________________

**44** ເພື່ອໃຫ້ທ່ານຮຽນຄືນເລື່ອງການອັດສະຈັນຂອງພະເຢຊູໃນ ມທ ບົດ 8-9 ໃຫ້ທ່ານແຕ່ງແບບແຜນດັ່ງຕໍ່ໄປນີ້ໃຫ້ແລ້ວ

| ວິເຄາະການອັດສະຈັນຂອງ ພະເຢຊູ | | | |
|---|---|---|---|
| ແຕ່ລະເລື່ອງ | ບົດແລະຂໍ້ | ນຳມາໃຊ້ | |
| 1. ຄົນຂີ້ທູດຜູ້ໜຶ່ງດີສະອາດ | 8:1-4 | | ບົດ 8 |
| 2. | | | |
| 3. | | | |
| 4. | | | |
| 5. | | | |
| 6. | | | ບົດ 9 |
| 7. | | | |
| 8. | | | |
| 9. | | | |
| 10. | | | |

ດັ່ງນັ້ນໝູ່ເພື່ອນຂອງເຮົາຜູ້ບໍ່ເຊື່ອອາດຈະຫຼົງຄິດຜິດວ່າກົດເກນວິທະຍາສາດມີອຳນາດເໜືອກວ່າພະເຈົ້າແຕ່ທີ່ຈິງບໍ່ແມ່ນເພາະ:

*ພະເຈົ້າເປັນຜູ້ແຕ່ງທຸກສິ່ງໄວ້ຕາມລຳດັບທີ່ພະອົງຈັດໄວ້ໃຫ້ ເພາະສະນັ້ນ ພະເຈົ້າ ເຮັດການອັດສະຈັນໄດ້. ທີ່ຈິງວິທະຍາສາດບໍ່ໄດ້ຂັດຂວາງຄວາມເຊື່ອແຕ່ຍິ່ງກວ່ານັ້ນອີກ ນັກວິທະຍາສາດອາດຈະເຮັດໃຫ້ເຮົາຍິ່ງເຂົ້າໃຈອຳ ນາດແລະສະຕິປັນຍາຂອງຜູ້ແຕ່ງຈັກກະວານໄວ້. ຖ້າວ່າຈັກກະວານທີ່ ພະເຈົ້າ ແຕ່ງໄວ້ໃຫຍ່ປານນັ້ນຜູ້ແຕ່ງກໍ່ຍິ່ງໃຫຍ່ກວ່ານັ້ນອີກ. ສາທຸຂອບຄຸນພະອົງທີ່ເປັນຜູ້ແຕ່ງ!*

*ຢ່າລືມຕອບບົດເສັງໂລດເດີ!*

**ຄຳຕອບ:**

**1** *ຈາກເທິງລົງລຸ່ມ.*

**2** *ເທິງລົງລຸ່ມ.*

**ຄໍາຕອບ (ຕໍ່):**

**3** *ເທິງລົງລຸ່ມ.*

**4** *ປີ ຄ.ສ. 1665*

**5** *ເທິງລົງລຸ່ມ.*

**6** *ກ. ຖືກ*

**7** *ຂ. ຖືກ*

**8** *ອະທິບາຍ...ອະທິບາຍ.*

**9** *ກ. ກົດ ໝາຍ. ຂ. ກົດເກນ.*

**10** *ກ. ກົດ ໝາຍ. ຂ. ກົດເກນ.*

**11** *ກ. ກົດໝາຍ. ຂ. ກົດເກນ.*

**12** *ກ. ພະເຈົ້າ. ຂ. ພະເຈົ້າ.*

**13** *ກ. ຝົນ...ພູ...ໂລກ ຂ. ໝາກເຫັບ, ຫິມະ... ເມກໝອກ...ລົມ ຄ. ພະອົງ...ເສຍ*

**14** *ໂລກ.*

**15** *ຄ. ຖືກ*

**16** *ພະເຈົ້າ*

**17** *ພະເຈົ້າ*

**18** *1. ຖືກກັບ ຂ. 2. ຖືກກັບ ຄ. 3. ຖືກກັບ ກ.*

**19** *ຄ. ຖືກ*

**20** *ກ. ພະເຈົ້າ. ຂ. ເພາະ ພະເຈົ້າ ສ້າງໄວ້ໃຫ້ເປັນຢ່າງນັ້ນ. (ຄໍາຄ້າຍຄືກໍ່ໄດ້)*
*ຄ. ພະເຈົ້າ.*

**21** *ບໍ່ມີໃຜ.*

**22** *ບໍ່*

**23** *ພະເຈົ້າ*

**24** *ໄດ້.*

**25** *ກ. ບໍ່ ຂ. ບໍ່ ຄ. ໄດ້*

**26** *ບໍ່.*

**27** *ກ. ປະຕິເສດພະອົງເອງ. ຂ. ຕົວະ.*

**28** *ຈໍາກັດ (ຜູກມັດ ກໍ່ໄດ້)*

**29** *ຂ. ຖືກ*

**30** *ກ. ຖືກ*

**31** *ໃຫ້ປຽບຄໍາຕອບຊຶ່ງກັນແລະກັນໃນປະຊຸມ ແຕ່ຄວນຈະມີສ່ວນທີ່ວ່າພະເຈົ້າຕົວະບໍ່ໄດ້ຫຼືປະຕິ ເສດຕົວເອງບໍ່ໄດ້*

**32** *ກ.ອະທິບາຍ. ຂ.ນິວເຕິນ. ຄ.ຈໍາກັດ (ຜູກມັດ ກໍ່ໄດ້)*

**ຄຳຕອບ (ຕໍ່):**

**33** *ກ. ພະເຈົ້າ ຂ. ເກີດ...ພະເຈົ້າ ຄ. ອະທິບາຍເຫດການ.*
*ງ. ຜູ້ແຕ່ງກົດທຳມະຊາດຕ້ອງມີອຳນາດເໜືອກົດນັ້ນໄດ້. (ຄຳຄ້າຍຄືກໍ່ໄດ້)*

**34** *ພະເຈົ້າ.*

**35** *ກ. ລົມ...ລົມ ຂ. ລົມ. ຄ. ກາ (ນົກຊະນິດໜຶ່ງ)*

**36** *ຕາມກົດທຳມະຊາດ.*

**37** *(ຍົກຕົວຢ່າງອັນໜຶ່ງມາຈາກຄຳຖາມ 14.35)*

**38** *ກ. ພະເຈົ້າ ຂ. ພະເຈົ້າ*

**39** *ກ. ພະເຈົ້າ ເປັນຜູ້ແຕ່ງໄວ້ແລະ ພະເຈົ້າ ບໍ່ປ່ຽນແປງຈັກເທື່ອ.*
*ຂ. ເຮັດໃຫ້ສິ່ງໃດເກີດຂຶ້ນບໍ່ໄດ້. ຈຳກັດ ພະເຈົ້າ ໄວ້ບໍ່ໄດ້.*
*ຄ. ໃນການອະທິບາຍສິ່ງທີ່ພົບເຫັນໃນທຳມະຊາດ.*
*ງ. ກົດເຫຼົ່ານັ້ນຈຳກັດ ພະເຈົ້າ ໄວ້ບໍ່ໄດ້.*
*ຈ. (ໃຫ້ປຽບຄຳຕອບເຊິ່ງກັນແລະກັນໃນປະຊຸມ)*

**40** *ກ. ພະເຈົ້າ ຂ. ພະເຈົ້າ... ພະເຈົ້າ.*

**41** *ກ. ຢຮ 11:41-43 ຂ. ມທ 9:6 ຄ. ມທ 8:3 ງ. ມທ 9:20*
*ຈ. ມທ 8:13 ສ. ລູກາ 17:14*

**42** *ກ. ຫາໃຫ້ສິ່ງທີ່ຈຳເປັນ. ຂ. ປົກຄອງດິນຟ້າອາກາດ. ຄ. ໄລ່ຜີອອກ.*
*ງ. ໂຜດຄົນເຈັບ ຫຼື ຕາຍໃຫ້ດີຄືນ. ຈ. ປົກຄອງດິນຟ້າອາກາດ.*
*ສ. ຫາໃຫ້ສິ່ງທີ່ຈຳເປັນ. ຊ. ໂຜດຄົນເຈັບຫຼືຕາຍໃຫ້ດີຄືນ. ຍ. ໄລ່ຜີອອກ.*

**43** *ກ. ເຮັດໃຫ້ສິ່ງໃດສິ່ງໜຶ່ງເກີດມີຂຶ້ນ ຈຳກັດ ພະເຈົ້າ ບໍ່ໄດ້.*
*ຂ. ອະທິບາຍປາກົດການຂອງທຳມະຊາດ.*
*ຄ. ກົດເກນຂອງວິທະຍາສາດຈຳກັດ ພະເຈົ້າ ບໍ່ໄດ້.*
*ງ. ໂຜດຄົນເຈັບຫຼືຄົນຕາຍໃຫ້ດີແລະຄືນມາ.*
*ໄລ່ຜີອອກ.*
*ຫາສິ່ງທີ່ຈຳເປັນໃຫ້.*
*ປົກຄອງດິນຟ້າອາກາດ.*

**44** *ໃຫ້ຜູ້ນຳປະຊຸມກວດການເຊັ່ນດຽວກັນກັບບົດເສັງ.*